**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0781 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2024

# ຂໍ້ຕົກລົງ
# ວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງ ທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (Sanitary and Phytosanitary-SPS) ກ່ອນການນຳເຂົ້າ ແລະ ການສົ່ງອອກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ໜັງສືສະເໜີຂອງກົມການຄ້າຕ່າງປະເທດ ສະບັບເລກທີ 1606/ກຄຕ, ລົງວັນທີ 25 ເມສາ 2024.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລາຍການສິນຄ້າ ທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (Sanitary and Phytosanitary-SPS) ກ່ອນການນຳເຂົ້າ ແລະ ການສົ່ງອອກ.

**ມາດຕາ 2 ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການນຳເຂົ້າ ແລະ ການສົ່ງອອກ**

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການນຳເຂົ້າ ແລະ ການສົ່ງອອກ ແມ່ນປະເພດສິນຄ້າທີ່ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ການທົດສອບ ຫຼື ການກວດກາໃຫ້ຖືກຕ້ອງຕາມລະບຽບການຂອງແຕ່ລະຂະແໜງການ ແລະ ໃຫ້ມີຄວາມສອດຄ່ອງທາງດ້ານສຸຂານາໄມ.

**ມາດຕາ 3 ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການນຳເຂົ້າ**

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການນຳເຂົ້າ ໂດຍອີງຕາມລະຫັດສາລະບານອັດຕາພາສີ ມີລາຍລະອຽດຕາມຕາລະລາງດັ່ງນີ້:

| ລ/ດ | ລະຫັດ ສິນຄ້າ | ລາຍການສິນຄ້າ | ມາດຕະການ | ເຫດຜົນການ ຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການການ ຢັ້ງຢືນ |
|---|---|---|---|---|---|---|---|
| 01 | 16–21 | ອາຫານ, ຜະ ລິດ ຕະພັນອາຫານ ແລະ ອາ ຫານເສີມ | ກວດກາ, ຢັ້ງຢືນຄວາມ ສອດຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມ ທີ່ໄດ້ຮັບອະນຸຍາດຂຶ້ນທະ ບຽນກັບກົມອາຫານແລະ ຢາ | ເພື່ອຮັບປະກັນຄຸນນະ ພາບ ແລະ ຄວາມປອດ ໄພຂອງອາຫານ ແນ່ໃສ່ ປົກປ້ອງສຸຂະພາບຂອງຜູ້ ບໍລິໂພກ | - ກົດໝາຍ ວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງ ວັນທີ 24 ກໍລະກົດ 2013;<br>- ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ-ສົ່ງອອກ ແລະ ສົ່ງຜ່ານ ອາຫານ ສະບັບເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018;<br>- ຂໍ້ຕົກລົງ ວ່າດ້ວຍການກວດກາອາຫານ ສະບັບເລກທີ 297/ກຊສ, ລົງວັນທີ 24 ກຸມພາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານ ສະບັບເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023. | ກົມອາຫານ ແລະ ຢາ, ກະຊວງສາ ທາລະນະສຸກ | ທຸກຄັ້ງກ່ອນ ການນຳເຂົ້າ |
| 02 | 250100 1000 | ເກືອໄອໂອດີນ | ກວດກາ, ຢັ້ງຢືນຄວາມ ສອດ ຄ່ອງຂອງຄຸນນະ ພາບ ແລະ ຄວາມປອດໄພ ຕາມທີ່ໄດ້ຮັບອະນຸຍາດຂຶ້ນ ທະບຽນກັບກົມອາຫານ ແລະ ຢາ | ເພື່ອຄວາມປອດໄພຂອງ ສິນຄ້າຕໍ່ຜູ້ຊົມໃຊ້ ແລະ ລຶບລ້າງບັນດາພະຍາດຂາດ ສານໄອໂອດີນ | - ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ-ສົ່ງອອກ ແລະ ສົ່ງຜ່ານ ອາຫານ ສະບັບເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018;<br>- ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານ ສະບັບ ເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023;<br>- ຂໍ້ກຳນົດ ວ່າດ້ວຍມາດຕະຖານ ເກືອໄອໂອດີນ ສະບັບ ເລກທີ 102/ກຊສ, ລົງວັນທີ 21 ມັງກອນ 2004. | ກົມອາຫານ ແລະ ຢາ, ກະຊວງສາ ທາລະນະສຸກ | ທຸກຄັ້ງກ່ອນ ການນຳເຂົ້າ |

| ລ/ດ | ລະຫັດ ສິນຄ້າ | ລາຍການສິນຄ້າ | ມາດຕະການ | ເຫດຜົນການ ຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການການ ຢັ້ງຢືນ |
|---|---|---|---|---|---|---|---|
| 03 | 2201-2202 | ນໍ້າດື່ມໃນພາຊະນະບັນຈຸປິດ | ກວດກາ, ຢັ້ງຢືນຄວາມສອດ ຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມທີ່ໄດ້ຮັບອະນຸຍາດຂຶ້ນທະບຽນກັບກົມອາຫານ ແລະ ຢາ | ເພື່ອປົກປ້ອງສຸຂະພາບຂອງຜູ້ບໍລິໂພກ | - ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ-ສົ່ງອອກ ແລະ ສົ່ງຜ່ານອາຫານ ເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018;<br>- ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານສະບັບເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023;<br>- ຂໍ້ຕົກລົງ ວ່າດ້ວຍນໍ້າດື່ມໃນ ພາຊະນະບັນຈຸປິດ ສະບັບເລກທີ 2750/ສທ, ລົງວັນທີ 28 ສິງຫາ 2023. | ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ | ທຸກຄັ້ງກ່ອນການນໍາເຂົ້າ |
| 04 | 2203-2209 | ເຄື່ອງດື່ມທີ່ມີທາດເຫຼົ້າ | ກວດກາ, ຢັ້ງຢືນຄວາມສອດຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມທີ່ ໄດ້ຮັບອະນຸຍາດຂຶ້ນທະບຽນກັບກົມອາຫານ ແລະ ຢາ | ເພື່ອປົກປ້ອງຊີວິດ ແລະ ສຸຂະພາບຂອງຄົນ | - ກົດໝາຍ ວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014;<br>- ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ-ສົ່ງອອກ ແລະ ສົ່ງຜ່ານອາຫານ ສະບັບເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018;<br>- ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານ ສະບັບເລກທີ 2749/ສທ, ລົງວັນທີ 28 ສິງຫາ 2023. | ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ | ທຸກຄັ້ງກ່ອນການນໍາເຂົ້າ |
| 05 | | ຢາພື້ນເມືອງ | ກວດກາ, ຢັ້ງຢືນຄວາມສອດຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມທີ່ໄດ້ຮັບອະນຸຍາດຂຶ້ນທະບຽນກັບກົມອາຫານ ແລະ ຢາ | ເພື່ອປົກປ້ອງຊີວິດ ແລະ ສຸຂະພາບຂອງຄົນ | - ກົດໝາຍ ວ່າດ້ວຍຢາແລະ ຜະລິດຕະພັນການແພດ ສະບັບເລກທີ 07/ລສພຊ, ລົງວັນທີ 21 ທັນວາ 2011;<br>- ດໍາລັດ ວ່າດ້ວຍຊັບພະຍາກອນທໍາມະຊາດທີ່ເປັນຢາ ສະບັບເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003;<br>- ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນຢາພື້ນເມືອງ ສະບັບເລກທີ 169/ສທ, ລົງວັນທີ 25 ມັງກອນ 2022. | ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ | ທຸກຄັ້ງກ່ອນການນໍາເຂົ້າ |

| ລ/ດ | ລະຫັດ ສິນຄ້າ | ລາຍການສິນຄ້າ | ມາດຕະການ | ເຫດຜົນການ ຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການການ ຢັ້ງຢືນ |
|---|---|---|---|---|---|---|---|
| 06 | | ຜະລິດຕະພັນເສີມ ສຸຂະພາບ | ກວດກາ, ຢັ້ງຢືນຄວາມສອດ ຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມທີ່ ໄດ້ ຮັບອະນຸຍາດຂຶ້ນທະບຽນກັບ ກົມອາຫານ ແລະ ຢາ | ເພື່ອປົກປ້ອງຊີວິດ ແລະ ສຸຂະພາບຂອງຄົນ | - ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນຜະລິດຕະພັນເສີມ ສຸຂະພາບ ສະບັບເລກທີ 2626/ສທ, ລົງວັນທີ 21 ສິງຫາ 2023;<br>- ແຈ້ງການ ກ່ຽວກັບການປະກອບເອກະສານຂໍອະນຸມັດນຳ ເຂົ້າວັດຖຸດິບ, ອຸປະກອນບັນຈຸ, ຢາປົວພະຍາດ ແລະ ອຸປະກອນການແພດ ມາຮັບໃຊ້ການຜະລິດ ແລະ ເພື່ອຈຳ ໜ່າຍ ສະ ບັບເລກທີ 2660/ກອຢ, ລົງວັນທີ 16 ມິຖຸນາ 2016. | ກົມອາຫານ ແລະ ຢາ, ກະຊວງສາ ທາລະນະສຸກ | ທຸກຄັ້ງກ່ອນ ການນຳເຂົ້າ |
| 07 | 0601-1404 240120 | ພືດ, ຜະລິດຕະພັນ ພືດ ແລະ ວັດຖຸ ຕ້ອງຄວບຄຸມ | ວິໄຈຄວາມສ່ຽງຂອງສັດຕູ ພືດ, ກວດກາ ແລະ ຢັ້ງຢືນ ສຸຂະນາໄມພືດ, ສານເຄມີ ຕົກຄ້າງ | ເພື່ອຮັບປະກັນຄວາມ ປອດໄພ ແລະ ປົກປ້ອງ ພືດ, ຄົນ, ສັດ ແລະ ສິ່ງ ແວດລ້ອມ | - ຂໍ້ຕົກລົງ ວ່າດ້ວຍມາດຕະການສຸຂະນາໄມພືດ ສຳລັບການນຳ ເຂົ້າ ແລະ ສົ່ງຜ່ານພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງ ຄວບຄຸມ ສະບັບເລກທີ 2985/ກປ, ລົງວັນທີ 28 ມິຖຸນາ 2019;<br>- ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີພືດ ແລະ ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມທີ່ຕ້ອງ ຂໍອະນຸຍາດກ່ອນການນຳເຂົ້າ ສປປ ລາວ ໂດຍຜ່ານການວິ ໃຈຄວາມສ່ຽງສັດຕູພືດ ສະບັບເລກທີ 2987/ກປ, ລົງວັນ ທີ 28 ມິຖຸນາ 2019;<br>- ບົດແນະນຳ ກ່ຽວກັບການນຳເຂົ້າ ແລະ ສົ່ງຜ່ານ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບເລກທີ 2881/ກປຝ, ລົງວັນທີ 11 ທັນວາ 2019. | ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ | ທຸກຄັ້ງກ່ອນ ການນຳເຂົ້າ |

| ລ/ດ | ລະຫັດ ສິນຄ້າ | ລາຍການສິນຄ້າ | ມາດຕະການ | ເຫດຜົນການ ຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການ ຢັ້ງຢືນ | ຮູບແບບ ການການ ຢັ້ງຢືນ |
|---|---|---|---|---|---|---|---|
| 08 | 3101-3105 | ຝຸ່ນ | ກວດກາ, ຢັ້ງຢືນຄວາມສອດຄ່ອງຂອງຄຸນນະພາບ ແລະ ຄວາມປອດໄພ ຕາມທີ່ໄດ້ຮັບອະນຸຍາດຂຶ້ນທະບຽນກັບກົມປູກຝັງ | ເພື່ອຮັບປະກັນວຽກງານກວດກາ ແລະ ຕິດຕາມ ທຸລະກິດ ກ່ຽວກັບຝຸ່ນ ໃຫ້ມີປະສິດທິພາບ ແລະ ຖືກຕ້ອງຕາມມາດຕະຖານ, ໃຫ້ມີຄວາມປອດໄພຕໍ່ຊີວິດຂອງຄົນ, ສັດ, ສິ່ງແວດລ້ອມ ແລະ ສັງຄົມ | - ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນ ໃນ ສປປ ລາວ ສະບັບເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013;<br>- ຄຳສັ່ງ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ໃນການກວດກາການຕິດສະຫຼາກຝຸ່ນ, ຢາປາບສັດຕູພືດ ແລະ ເມັດພັນພືດ ສະບັບເລກທີ 1893/ກປ, ລົງວັນທີ 24 ກັນຍາ 2020. | ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ | ທຸກຄັ້ງກ່ອນການນຳເຂົ້າ |
| 09 | 0101-0102<br>0104-0105 | ສັດ, ສັດນ້ຳ, ຜະລິດຕະພັນສັດ ແລະ ສັດນ້ຳ | ການກວດສອບຄວາມສອດຄ່ອງທາງດ້ານມາດຕະການດ້ານສຸຂານາໄມ (ມີການຢັ້ງຢືນສຸຂະພາບສັດ, ສັດ ນ້ຳ ຫຼື ຢັ້ງຢືນສຸຂານາໄມຜະລິດຕະພັນສັດ, ສັດນ້ຳ) | ເພື່ອປ້ອງກັນ ແລະ ສະກັດກັ້ນການນຳເອົາເຊື້ອພະຍາດສັດ/ສັດນ້ຳຕ່າງຖິ່ນ ມາແຜ່ກະຈາຍຢູ່ ສປປ ລາວ, ແນໃສ່ປົກປ້ອງຊີວິດ, ສຸຂະພາບຂອງຄົນ, ສັດ/ສັດນ້ຳ ແລະ ສິ່ງແວດລ້ອມໃຫ້ແນ່ໃຈວ່າສິນຄ້າດັ່ງກ່າວ ມີຄວາມປອດໄພ | - ກົດໝາຍ ວ່າດ້ວຍການລ້ຽງ ສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;<br>- ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະ ກົດ 2023;<br>- ດຳລັດ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ ສະບັບເລກທີ 228/ລບ, ລົງວັນທີ 31 ພຶດສະພາ 2012;<br>- ດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມິຖຸນາ 2012; | ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ | ທຸກຄັ້ງກ່ອນການນຳເຂົ້າ |

| ລ/ດ | ລະຫັດສິນຄ້າ | ລາຍການສິນຄ້າ | ມາດຕະການ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການຢັ້ງຢືນ | ຮູບແບບການການຢັ້ງຢືນ |
|---|---|---|---|---|---|---|---|
| | | | | | - ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ສະບັບເລກທີ 0795/ກປ, ລົງວັນທີ 18 ເມສາ 2019;<br>- ຂໍ້ຕົກລົງ ວ່າດ້ວຍການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ ສະບັບເລກທີ 4211/ກປ, ລົງວັນທີ 29 ພະຈິກ 2019. | | |
| 10 | 2301-2309 | ອາຫານສັດ | ກວດກາ, ຢັ້ງຢືນຄຸນນະພາບ ແລະ ຄວາມປອດໄພຂອງອາຫານສັດ | ເພື່ອໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ຮັບປະກັນຄວາມປອດໄພ ແລະ ມີຄຸນຄ່າທາງໂພສະນາການ | - ດໍາລັດ ວ່າດ້ວຍອາຫານສັດ, ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020;<br>- ຄູ່ມືການຂຶ້ນທະບຽນອາຫານສັດ ສະບັບເລກທີ 1594/ກປ, ລົງວັນທີ 06 ມີນາ 2023. | ກົມລ້ຽງສັດແລະການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້ | ທຸກຄັ້ງກ່ອນການນໍາເຂົ້າ |
| 11 | | ຢາສັດຕະວະແພດ | ກວດກາ, ຢັ້ງຢືນຄຸນນະພາບ ແລະ ຄວາມປອດໄພຂອງຢາສັດຕະວະແພດ | ເພື່ອຮັບປະກັນຄວາມປອດໄພຂອງຊີວິດ, ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ | - ດໍາລັດ ວ່າດ້ວຍຢາສັດຕະວະ ແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020<br>- ຂໍ້ຕົກລົງ ວ່າດ້ວຍຢາຕ້ານເຊື້ອຈຸລະຊີ ສໍາລັບສັດ ແລະ ສັດນໍ້າ ສະບັບເລກທີ 0545/ກປ, ລົງວັນທີ 12 ພຶດສະພາ 2021 | ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກໍາ ແລະ ປ່າໄມ້ | ທຸກຄັ້ງກ່ອນການນໍາເຂົ້າ |

**ໝາຍເຫດ:**

ສໍາລັບສິນຄ້າທີ່ກໍານົດໃນຕາຕະລາງ ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ໄດ້ກໍານົດລະຫັດສິນຄ້າ ຫຼື ກໍານົດແລ້ວ ແຕ່ບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ແມ່ນຂະແໜງການກ່ຽວຂ້ອງຈະສົມທົບກັບລັດຖະການພາສີໃນການຈັດເລກລະຫັດສິນຄ້າຂອງສິນຄ້າຕົວຈິງ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນລາຍລະອຽດຂອງສິນຄ້າ ຕາມທີ່ໄດ້ກໍານົດໃນສາລະບານອັດຕາພາສີເອກະພາບ.

**ມາດຕາ 4 ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການສົ່ງອອກ**

ລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການສົ່ງອອກ ໃຫ້ປະຕິບັດຕາມລະບຽບການຂອງປະເທດປາຍທາງ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ການປັບປຸງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ການສຸຂານາໄມພືດ (SPS) ກ່ອນການນໍາເຂົ້າ**

ການປັບປຸງລາຍການສິນຄ້າທີ່ຕ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ສຸຂານາໄມພືດ (SPS) ກ່ອນການນໍາເຂົ້າ ແມ່ນການເພີ່ມ ຫຼື ຫຼຸດລາຍການ ທີ່ກໍານົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

ການປັບປຸງລາຍການສິນຄ້າ ແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກ ລັດຖະມົນຕີ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕາມການຄົ້ນຄວ້າ ແລະ ສະເໜີຂອງຂະແໜງການກ່ຽວຂ້ອງ.

ພາຍຫຼັງທີ່ໄດ້ປັບປຸງລາຍການສິນຄ້າສໍາເລັດແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງໄດ້ແຈ້ງໃຫ້ຂະແໜງການກ່ຽວຂ້ອງ ຮັບຊາບ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 6 ການຍື່ນຄໍາຮ້ອງຂໍການຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ ແລະ ການສຸຂານາໄມພືດ (SPS) ກ່ອນການນໍາເຂົ້າ ແລະ ການສົ່ງອອກ**

ຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ຕ້ອງຍື່ນຄໍາຮ້ອງຕໍ່ຂະແໜງການກ່ຽວຂ້ອງ ກ່ອນຈະນໍາເຂົ້າ ຫຼື ສົ່ງອອກສິນຄ້າ ໃນແຕ່ລະຄັ້ງ ຕາມລາຍການສິນຄ້າທີ່ໄດ້ກໍານົດໃນຕາຕະລາງຂອງຂໍ້ຕົກລົງສະບັບນີ້ ໂດຍປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມລະບຽບການຂອງຂະແໜງການກ່ຽວຂ້ອງ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ